**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນອອມຊັບ-ສິນເຊື່ອ ອທອ

ເລກທີ 093 /ສອສ.ອທອ

ນະຄອນຫຼວງວຽງຈັນ, ວັນທີ 26/ 9 /14

# ແຈ້ງການ

ເຖິງ: ບັນດາສະມາຊິກສະຫະກອນອອມຊັບ-ສິນເຊື່ອ ອທອ

ເລື່ອງ: ການຂະຫຍາຍເວລາ ແລະປັບປຸງເງື່ອນໄຂການກູ້ເງິນ ນຳ ສອສ

- ອີງຕາມ ຂໍ້ຕົກລົງ ເລກທີ 2263/ລທລ, ລົງວັນທີ 15 ມິຖຸນາ 2005 ວ່າດ້ວຍການສ້າງຕັ້ງສະຫະກອນອອມຊັບ-ສິນເຊື່ອ ລທລ
- ອີງຕາມ ການຕົກລົງຂອງກອງປະຊຸມຄະນະບໍລິຫານງານ ສະຫະກອນອອມຊັບ-ສິນເຊື່ອ ອທອ ຄັ້ງວັນທີ 10 ກັນຍາ 2014 ໂດຍການເຫັນດີ ຂອງສະພາບໍລິຫານ ສອສ ຄັ້ງວັນທີ 22 ກັນຍາ 2014

ຫ້ອງການອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາສະມາຊິກ ສອສ ທົ່ວປະເທດຊາບວ່າ ສອສ ຈະໄດ້ຂະຫຍາຍເວລາ ແລະ ປັບປຸງເງື່ອນໄຂການກູ້ເງິນ ແບບຕັດເງິນເດືອນດັ່ງມີລາຍລະອຽດຕໍ່ໄປນີ້:

1. ຂະຫຍາຍເວລາການກູ້ເງິນ ແບບຕັດເງິນເດືອນຈາກ 12 ເດືອນ ເປັນ 18 ເດືອນ ດ້ວຍດອກເບ້ຍ 1,7% ໃນວົງເງິນກູ້ຢືມສູງສຸດບໍ່ເກີນ 60,000,000 ກີບ.
2. ອະນຸມັດການກູ້ເງິນແບບຕັດເງິນເດືອນ ໄລຍະເວລາການກູ້ຢືມ 36 ເດືອນ, ດອກເບ້ຍ 1,7% ດ້ວຍເງື່ອນໄຂເອົາເງິນຮຸ້ນຄ້ຳປະກັນ ໃນວົງເງິນກູ້ສູງສຸດບໍ່ເກີນວົງເງິນຮຸ້ນທີ່ຄ້ຳປະກັນ ແລະ ບໍ່ເກີນ 60,000,000 ກີບ.
3. ອະນຸມັດການກູ້ເງິນແບບຕັດເງິນເດືອນ ໄລຍະການກູ້ຢືມ 36 ເດືອນ, ດອກເບ້ຍ 1,7% ດ້ວຍເງື່ອນໄຂເອົາໃບຕາດິນຂອງແທ້ມາຄ້ຳປະກັນ. ໃນວົງເງິນກູ້ຢືມບໍ່ເກີນ 60,000,000 ກີບ.
4. ການກູ້ເງິນຕາມ 3 ແບບຂ້າງເທິງຈະໄດ້ຈັດຕັ້ງປະຕິບັດພຽງສາມເດືອນ, ແຕ່ເດືອນຕຸລາ ຫາເດືອນທັນວາ 2014 ເທົ່ານັ້ນ.
5. ສຳລັບເງື່ອນໄຂຕ່າງໆແມ່ນຈະລະບຸໃນສັນຍາ. (ມີຮ່າງສັນຍາ ຂອງການກູ້ແຕ່ລະປະເພດຄັດຕິດມາພ້ອມນີ້ ຫຼືທ່ານສາມາດດາວໂລດໄດ້ຈາກເວບໄຊ ຂອງ ສອສ ທີ່ scc.ettllao.com)

ສະນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານສະມາຊິກ ສອສ ເພື່ອຊາບ.

ຫ້ອງການອຳນວຍການ ສອສ

ສອບຖາມຂໍ້ມູນ:

- ທ່ານ ນ. ລຳພອນ ແກ້ວແກ່ນຈັນ ໂທ: 020 22210057
- ທ່ານ ນ. ມະໄລທິບ ໄທລາວັນ ໂທ: 020 22210078

ນິງມາລາ ຊຽວວົງພະຈັນ